**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ກະຊວງອຸດສາຫະກຳ ແລະ ການຄ້າ ເລກທີ 0666 /ອຄ
ນະຄອນຫຼວງວຽງຈັນ, ວັນທີ 22 ເມສາ 2025

# ຂໍ້ຕົກລົງ
# ວ່າດ້ວຍກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກະຊວງອຸດສາຫະກຳ ແລະ ການຄ້າ ສະບັບເລກທີ 275/ນຍ, ລົງວັນທີ 01 ກັນຍາ 2023;
- ອີງຕາມ ດຳລັດ ວ່າດ້ວຍການຄ້າທາງເອເລັກໂຕຣນິກ ສະບັບເລກທີ 296/ລບ, ລົງວັນທີ 12 ເມສາ 2021;
- ອີງຕາມ ໜັງສືສະເໜີຂອງກົມການຄ້າພາຍໃນ ສະບັບເລກທີ 0364/ກຄພນ, ລົງວັນທີ 09 ເມສາ 2025.

## ລັດຖະມົນຕີ ກະຊວງອຸດສາຫະກຳແລະ ການຄ້າ ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບວຽກງານຄຸ້ມຄອງ, ຕິດຕາມ ກວດກາ ການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ເພື່ອເຮັດໃຫ້ການດຳເນີນກິດຈະການດັ່ງກ່າວ ຖືກຕ້ອງສອດຄ່ອງກັບກົດໝາຍ ແລະ ລະບຽບການ ແນໃສ່ປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳຂອງຜູ້ຊື້ຄຳ ແລະ ຜູ້ຂາຍຄຳ ທີ່ນຳໃຊ້ຊ່ອງທາງເອເລັກໂຕຣນິກ, ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມຂອງຊາດ.

### ມາດຕາ 2 ກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

ກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ແມ່ນການບໍລິການຊື້-ຂາຍຄຳ ຂອງຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ທີ່ນຳໃຊ້ຊ່ອງທາງເອເລັກໂຕຣນິກ ເປັນຕົ້ນ ເວັບໄຊ ຫຼື ແອັບພລິເຄເຊິນ ໂດຍການຊຳລະເປັນເງິນກີບ ຜ່ານລະບົບຂອງທະນາຄານທຸລະກິດ ຢູ່ ສປປ ລາວ.

### ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍດັ່ງນີ້:

1. **ການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ** ໝາຍເຖິງ ທຸລະກຳການຊື້-ຂາຍຄຳ ເທື່ອລະໜ້ອຍ ໂດຍນຳໃຊ້ເວັບໄຊ ຫຼື ແອັບພລິເຄເຊິນ ຜ່ານຊ່ອງທາງເອເລັກໂຕຣນິກ;

2. **ຄຳ** ໝາຍເຖິງ ຄຳແທ່ງ ແລະ ຄຳຮູບປະພັນ ທີ່ມີອັດຕາສ່ວນຄຳ 99,99% ຊຶ່ງບໍ່ກວມເອົາຄຳແທ່ງທີ່ສາກົນນຳໃຊ້ເປັນເຄື່ອງມືຊຳລະ ລະຫວ່າງປະເທດ ຕາມລະບຽບການຂອງທະນາຄານແຫ່ງ ສປປ ລາວ (London Bullion Market Association-LBMA) ແລະ ບໍ່ກວມເອົາແຮ່ຄຳ;

3. **ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ** ໝາຍເຖິງ ນິຕິບຸກຄົນ ທີ່ມີຊ່ອງທາງການຊື້-ຂາຍ ຜ່ານເວັບໄຊ ແລະ ແອັບພລິເຄເຊີນຂອງຕົນ ລວມທັງທະນາຄານທຸລະກິດ ແລະ ທະນາຄານຄຳ ເພື່ອດຳເນີນທຸລະກຳຊື້-ຂາຍຄຳ ແລະ ໄດ້ຮັບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຕາມທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;

4. **ຮ້ານຈຳໜ່າຍວັດຖຸມີຄ່າ** ໝາຍເຖິງ ຮ້ານຈຳໜ່າຍຄຳ ທີ່ໄດ້ແຈ້ງຂຶ້ນທະບຽນວິສາຫະກິດ ແລະ ໄດ້ຮັບອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ ຕາມກົດໝາຍ ວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ;

5. **ຜູ້ຊື້ຄຳ** ໝາຍເຖິງ ບຸກຄົນທົ່ວໄປ ຫຼື ຜູ້ໃຊ້ບໍລິການ ທີ່ຊື້ຄຳ ຜ່ານທາງເອເລັກໂຕຣນິກ;

6. **ບັນຊີສະມາຊິກ** ໝາຍເຖິງ ບັນຊີຂໍ້ມູນຂອງຜູ້ຊື້ຄຳ ທີ່ໄດ້ລົງທະບຽນ ເພື່ອເຮັດທຸລະກຳການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຢູ່ ສປປ ລາວ.

## ໝວດທີ 2
## ການຂໍອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

**ມາດຕາ 5 ເງື່ອນໄຂການຂໍອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳຜ່ານທາງເອເລັກໂຕຣນິກ**

ຜູ້ທີ່ມີຈຸດປະສົງ ຂໍອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນພົນລະເມືອງ ທີ່ມີສັນຊາດລາວ ແລະ ມີພູມລຳເນົາ ຢູ່ ສປປ ລາວ;
2. ມີຜູ້ບໍລິຫານ ຢ່າງໜ້ອຍ ໜຶ່ງຄົນ ທີ່ມີປະສົບການໃນການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຢູ່ ສປປ ລາວ ຢ່າງໜ້ອຍ 5 ປີ;
3. ມີທຶນຈົດທະບຽນ 30 ຕື້ກີບ ຂຶ້ນໄປ;
4. ໄດ້ຮັບອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ ຈາກກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ;
5. ເປັນສະມາຊິກສະມາຄົມຄຳ, ເຄື່ອງປະດັບ ແລະ ອັນຍະມະນີລາວ;
6. ມີບັນຊີເງິນກີບຂອງທະນາຄານທຸລະກິດ ຢູ່ ສປປ ລາວ;
7. ໄດ້ຮັບການຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ຈາກກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ;
8. ໄດ້ຮັບການຢັ້ງຢືນມາດຕະຖານດ້ານເຕັກນິກຂອງເວັບໄຊ ຫຼື ແອັບພລິເຄເຊີນ ຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;
9. ມີຫຼັກຊັບຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 6 ການຂໍອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ**

ຜູ້ທີ່ມີຈຸດປະສົງ ຂໍອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ຍື່ນຄຳຮ້ອງຕໍ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ໂດຍປະກອບເອກະສານ ດັ່ງນີ້:

1. ຄຳຮ້ອງ ຕາມແບບພິມຂອງກົມການຄ້າພາຍໃນ;
2. ສຳເນົາໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດການຈຳໜ່າຍວັດຖຸມີຄ່າ;

4. ສຳເນົາໃບຢັ້ງຢືນການເປັນສະມາຊິກຈາກສະມາຄົມຄຳ, ເຄື່ອງປະດັບ ແລະ ອັນຍະມະນີລາວ;

5. ສຳເນົາໃບຢັ້ງຢືນມາດຕະຖານດ້ານເຕັກນິກຂອງເວັບໄຊ ຫຼື ແອັບພລິເຄເຊິນ ຈາກກະຊວງເຕັກໂນໂລຊີ ແລະ ການສື່ສານ;

6. ສຳເນົາໃບຢັ້ງຢືນຮັບຮູ້ການຄ້າທາງເອເລັກໂຕຣນິກ ຈາກກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ;

7. ສຳເນົາສັນຍາ ຫຼື ເອກະສານຢັ້ງຢືນການເຊື່ອມຕໍ່ລະບົບ ເພື່ອຮອງຮັບການຊຳລະທາງເອເລັກໂຕຣນິກ ຮ່ວມກັບຜູ້ໃຫ້ບໍລິການຊຳລະເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ;

8. ສຳເນົາໃບອະນຸຍາດດຳເນີນການໃຫ້ບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຈາກທະນາຄານແຫ່ງ ສປປ ລາວ ສຳລັບທະນາຄານທຸລະກິດ, ສະຖາບັນການເງິນ ແລະ ທະນາຄານຄຳ;

9. ສຳເນົາໃບຢັ້ງຢືນການເປີດບັນຊີເງິນກີບສະເພາະການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຢູ່ທະນາຄານທຸລະກິດ;

10. ສຳເນົາໃບຢັ້ງຢືນຫຼັກຊັບຄ້ຳປະກັນ ຈາກທະນາຄານທຸລະກິດ.

**ມາດຕາ 7 ການພິຈາລະນາໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ**

ພາຍຫຼັງໄດ້ຮັບເອກະສານຖືກຕ້ອງ ແລະ ຄົບຖ້ວນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້, ກົມການຄ້າພາຍໃນ ຕ້ອງພິຈາລະນາອອກໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ພາຍໃນ ສິບຫ້າວັນ ລັດຖະການນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

ກໍລະນີ ເອກະສານບໍ່ຖືກຕ້ອງ ແລະ ບໍ່ຄົບຖ້ວນ, ກົມການຄ້າພາຍໃນ ຕ້ອງແຈ້ງເປັນລາຍລັກອັກສອນໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ຫ້າວັນ ລັດຖະການ ເພື່ອປັບປຸງແກ້ໄຂ.

ກໍລະນີ ບໍ່ສາມາດອອກໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ, ກົມການຄ້າພາຍໃນ ຕ້ອງແຈ້ງເຫດຜົນເປັນລາຍລັກອັກສອນ ໃຫ້ຜູ້ຍື່ນຄຳຮ້ອງຊາບ ພາຍໃນ ສິບຫ້າວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານເປັນຕົ້ນໄປ.

**ມາດຕາ 8 ອາຍຸ ແລະ ການຕໍ່ອາຍຸໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ**

ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ມີອາຍຸນຳໃຊ້ ສອງ ປີ ແລະ ສາມາດຕໍ່ໄດ້.

ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ທີ່ມີຈຸດປະສົງຂໍຕໍ່ອາຍຸໃບອະນຸຍາດດັ່ງກ່າວ ໃຫ້ຍື່ນຄຳຮ້ອງຕໍ່ກົມການຄ້າພາຍໃນ ຢ່າງໜ້ອຍ ສາມສິບວັນ ກ່ອນວັນໝົດອາຍຸການນຳໃຊ້ ແລະ ປະກອບເອກະສານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 6 ຂອງຂໍ້ຕົກລົງສະບັບນີ້ ແລະ ເອກະສານເພີ່ມເຕີມດັ່ງນີ້:

1. ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ສະບັບຕົ້ນ;
2. ໃບຢັ້ງຢືນການມອບພັນທະອາກອນ ປະຈຳປີ.

**ມາດຕາ 9 ການໂຈະ ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ**

ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຈະຖືກໂຈະ ກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີໂຈະດ້ວຍຄວາມສະໝັກໃຈ ແຕ່ຕ້ອງແຈ້ງບັນຊີສະມາຊິກ, ດຳເນີນການຊຳລະບັນຊີສະມາຊິກ ແລະ ໜີ້ສິນຕ່າງໆໃຫ້ສຳເລັດກ່ອນ ຊຶ່ງຕ້ອງສະເໜີຕໍ່ກົມການຄ້າພາຍໃນ ກ່ອນການໂຈະກິດຈະການດັ່ງກ່າວ ພາຍໃນ ຫົກສິບ ວັນ;

2. ບໍ່ສະຫຼຸບລາຍງານຜົນການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ແກ່ກົມການຄ້າພາຍໃນ ຕິດຕໍ່ກັນພາຍໃນ ສອງເດືອນ;

3. ໃຈະພາຍຫຼັງທີ່ໄດ້ມີການກ່າວເຕືອນເປັນລາຍລັກອັກສອນ ຈາກກົມການຄ້າພາຍໃນ ຊຶ່ງຜູ້ດຳເນີນກິດຈະການ ຕ້ອງປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍຫຼັງທີ່ຖືກສັ່ງໂຈະ ພາຍໃນ ເກົ້າສິບ ວັນ;

4. ນຳໃຊ້ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໝົດອາຍຸ;

5. ຜູ້ດຳເນີນກິດຈະການ ສະໜອງຂໍ້ມູນບໍ່ຖືກຕ້ອງ ຫຼື ພົວພັນກັບຄະດີໃດໜຶ່ງ ທີ່ເປັນການລະເມີດຕໍ່ກົດໝາຍ ແລະ ລະບຽບການ;

6. ຜູ້ດຳເນີນກິດຈະການ ປະສົບບັນຫາໃນການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຊຶ່ງບໍ່ສາມາດສົ່ງມອບຄຳ ຫຼື ຊຳລະຄ່າເສຍຫາຍໃຫ້ກັບຜູ້ຊື້ຄຳຕາມຈຳນວນ.

### ມາດຕາ 10 ການຍົກເລີກ ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຈະຖືກຍົກເລີກ ໃນກໍລະນີໃດໜຶ່ງ ດັ່ງນີ້:

1. ສະເໜີຍົກເລີກດ້ວຍຄວາມສະໝັກໃຈ ແຕ່ຕ້ອງແຈ້ງບັນຊີສະມາຊິກ, ດຳເນີນການຊຳລະບັນຊີສະມາຊິກ ແລະ ໜີ້ສິນຕ່າງໆໃຫ້ສຳເລັດກ່ອນ ຊຶ່ງຕ້ອງສະເໜີຕໍ່ກົມການຄ້າພາຍໃນ ກ່ອນການຍົກເລີກກິດຈະການດັ່ງກ່າວ ພາຍໃນ ຫົກສິບ ວັນ;

2. ບໍ່ປັບປຸງແກ້ໄຂຂໍ້ຄົງຄ້າງ ພາຍຫຼັງທີ່ຖືກສັ່ງໂຈະ ແລະ ຍັງສືບຕໍ່ເຄື່ອນໄຫວດຳເນີນກິດຈະການໃນເວລາທີ່ຖືກສັ່ງໂຈະ;

3. ຜູ້ດຳເນີນກິດຈະການ ບໍ່ຕໍ່ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ພາຍຫຼັງໃບອະນຸຍາດອະນຸຍາດດຳເນີນກິດຈະການ ໝົດອາຍຸ ພາຍໃນ ເກົ້າສິບ ວັນ;

4. ມີຄຳຕັດສິນຂອງສານປະຊາຊົນ.

## ໝວດທີ 3
## ການຄ້ຳປະກັນ ແລະ ການຖອນຫຼັກຊັບຄ້ຳປະກັນ

### ມາດຕາ 11 ການຄ້ຳປະກັນ

ຜູ້ທີ່ມີຈຸດປະສົງ ຂໍອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຕ້ອງມີວົງເງິນຄ້ຳປະກັນ ຢ່າງໜ້ອຍ ຈຳນວນ ໜຶ່ງຮ້ອຍຕື້ກີບ (100,000,000,000 ກີບ) ທີ່ຝາກຢູ່ທະນາຄານທຸລະກິດ. ສຳລັບ ທະນາຄານທຸລະກິດ, ສະຖາບັນການເງິນ ແລະ ທະນາຄານຄຳ ທີ່ຕ້ອງການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຕ້ອງມີຫຼັກຊັບຄ້ຳປະກັນໄວ້ກັບທະນາຄານທຸລະກິດອື່ນ.

ສຳລັບວົງເງິນຄ້ຳປະກັນ ຕ້ອງໄດ້ຮັບການປະເມີນຄືນທຸກໆ ຫົກເດືອນ ແລະ ພິຈາລະນາວົງເງິນຄ້ຳປະກັນ ເພື່ອໃຫ້ສອດຄ່ອງກັບການຂະຫຍາຍຕົວຂອງສະພາບເສດຖະກິດ ແລະ ຄວາມຮຽກຮ້ອງຕ້ອງການຂອງຜູ້ຊື້-ຜູ້ຂາຍ ຜ່ານທາງເອເລັກໂຕຣນິກ ໃນແຕ່ລະໄລຍະ.

ວົງເງິນຄ້ຳປະກັນດັ່ງກ່າວ ຜູ້ດຳເນີນກິດຈະການບໍ່ມີສິດຖອນ, ໂອນ ຫຼື ໃຊ້ຄ້ຳປະກັນ ໃຫ້ແກ່ທຸລະກຳອື່ນ ເວັ້ນເສຍແຕ່ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ປະຕິບັດຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງຂໍ້ຕົກລົງສະບັບນີ້ ຢ່າງຄົບຖ້ວນ.

### ມາດຕາ 12 ການຖອນວົງເງິນຄ້ຳປະກັນ

ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ສາມາດຖອນວົງເງິນຄ້ຳປະກັນ ໂດຍການສະເໜີຂໍຍົກເລີກກິດຈະການດ້ວຍຄວາມສະໝັກໃຈ ແຕ່ຕ້ອງໄດ້ສົ່ງມອບຄຳ ໃຫ້ກັບຜູ້ຊື້ຄຳຄົບຖ້ວນ ແລະ ຊຳລະໜີ້ສິນທີ່ກ່ຽວຂ້ອງກັບການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ສຳເລັດ ພາຍໃນ ເກົ້າສິບວັນ.

**ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ບໍ່ມີສິດຖອນເງິນຄ້ຳປະກັນ ກໍລະນີ ດັ່ງນີ້:**

1. ພາຍຫຼັງທີ່ກົມການຄ້າພາຍໃນ ຕິດຕາມ ກວດກາ ເຫັນວ່າ ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ປະສົບບັນຫາໃນການດຳເນີນກິດຈະການ ບໍ່ສາມາດສົ່ງມອບຄຳ ຫຼື ຊໍາລະຄ່າເສຍຫາຍ ຕາມຈຳນວນຄຳສະສົມ, ກົມການຄ້າພາຍໃນ ຕ້ອງປະສານສົມທົບກັບຂະແໜງການກ່ຽວຂ້ອງ ເພື່ອດຳເນີນການແກ້ໄຂ ໂດຍນຳໃຊ້ຫຼັກຊັບຄ້ຳປະກັນ ຊໍາລະໃຫ້ແກ່ຜູ້ຊື້ຄຳ ຕາມກົດໝາຍ ແລະ ລະບຽບການ;

2. ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຖືກສານຕັດສິນລົ້ມລະລາຍ ຫຼື ໃຫ້ຢຸດເຊົາການດຳເນີນກິດຈະການ, ການຖອນຫຼັກຊັບຄ້ຳປະກັນ ເພື່ອຊໍາລະສະສາງໃຫ້ແກ່ຜູ້ຊື້ຄຳ ແລະ ໜີ້ສິນທີ່ກ່ຽວຂ້ອງ ໃຫ້ປະຕິບັດຕາມຄຳຕັດສິນຂອງສານ.

## ໝວດທີ 4
## ສິດ ແລະ ພັນທະຂອງຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

### ມາດຕາ 13 ສິດ ຂອງຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ມີສິດ ດັ່ງນີ້:

1. ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃນຂອບເຂດທີ່ຕົນໄດ້ຮັບອະນຸຍາດ;
2. ໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທຳ ທີ່ໄດ້ມາຈາກການດຳເນີນທຸລະກິດຂອງຕົນ ຕາມກົດໝາຍ ແລະ ລະບຽບການ;
3. ນຳໃຊ້ຊ່ອງທາງພາຫະນະສື່ມວນຊົນໃນການດຳເນີນກິດຈະການການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໂດຍສອດຄ່ອງຕາມກົດໝາຍ ແລະ ລະບຽບການ;
4. ໄດ້ຮັບດອກເບ້ຍ ທີ່ເກີດຂຶ້ນຈາກຫຼັກຊັບຄ້ຳປະກັນ ທີ່ຝາກຢູ່ທະນາຄານທຸລະກິດ;
5. ນຳໃຊ້ສິດອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 14 ພັນທະ ຂອງຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ມີພັນທະ ດັ່ງນີ້:

1. ຮັບປະກັນຄວາມປອດໄພຂອງລະບົບ ເປັນຕົ້ນ ການເກັບຮັກສາຂໍ້ມູນໃນບ່ອນທີ່ຮັບປະກັນຄວາມປອດໄພ, ສາມາດເກັບກູ້ຄືນຂໍ້ມູນ ແລະ ການຮັກສາຄວາມລັບຂອງລູກຄ້າ;
2. ສ້າງບັນຊີສະມາຊິກ ເພື່ອຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຊຶ່ງສາມາດລະບຸຂໍ້ມູນຕົວຕົນແທ້ຈິງຂອງລູກຄ້າ, ລວມທັງ ລາຍການຊື້-ຂາຍຄຳແຕ່ລະທຸລະກຳ, ຈຳນວນ, ນ້ຳໜັກ, ຄຸນນະພາບ, ລາຄາ, ວັນທີ ແລະ ເວລາຊື້-ຂາຍ ພາຍຫຼັງທີ່ຜູ້ຊື້ຄຳຊໍາລະສຳເລັດຜ່ານທາງເອເລັກໂຕຣນິກ;
3. ຊື້-ຂາຍຄຳຜ່ານທາງເອເລັກໂຕຣນິກ ຕ້ອງຊໍາລະເປັນເງິນກີບ;
4. ສ້າງໃບຢັ້ງຢືນເອເລັກໂຕຣນິກໃນການຊື້-ຂາຍ ຖອນຄຳ ໂດຍມີເນື້ອໃນຕົ້ນຕໍ ຄື: ຂໍ້ມູນຂອງລູກຄ້າ, ລາຍການທີ່ກຳນົດລະຫັດແບບຄຳ, ຈຳນວນ, ນ້ຳໜັກ, ຄຸນນະພາບ, ລາຄາ, ວັນທີ ແລະ ເວລາຊື້-ຂາຍ;
5. ນຳສົ່ງໃບຢັ້ງຢືນເອເລັກໂຕຣນິກໃນການຊື້-ຂາຍ ຖອນຄຳ ໃຫ້ສະມາຊິກຜ່ານທາງການສື່ສານໃດໜຶ່ງ ແລະ ເກັບຮັກສາໄວ້ໃນຖານຂໍ້ມູນທີ່ປອດໄພ;
6. ຮັບປະກັນການສົ່ງມອບຄຳຕົວຈິງໃນເວລາທີ່ຜູ້ຊື້ຄຳສະສົມຕ້ອງການຖອນ ໂດຍຕ້ອງໃຫ້ຄວາມສະດວກທາງດ້ານສະຖານທີ່, ເວລາ ແລະ ມີຫຼັກຖານໃນການມອບ-ຮັບຄຳຕົວຈິງ ໂດຍບໍ່ເກີນ ຫ້າວັນ ນັບຈາກມື້ສັ່ງຖອນ;
7. ກໍລະນີ ບັນຊີສະມາຊິກ ບໍ່ມີການເຄື່ອນໄຫວ ພາຍໃນ ສິບສອງເດືອນ, ຕ້ອງແຈ້ງໃຫ້ສະມາຊິກຢັ້ງຢືນການສືບຕໍ່ນຳໃຊ້ ຫຼື ປິດບັນຊີດັ່ງກ່າວ ຜ່ານທາງເອເລັກໂຕຣນິກ. ຖ້າບໍ່ໄດ້ຮັບການຢັ້ງຢືນຄືນພາຍໃນ

ກຳນົດເວລາ ຫົກສິບວັນ, ຕ້ອງສະຫຼຸບລາຍງານຂໍ້ມູນທັງໝົດຂອງບັນຊີດັ່ງກ່າວ ໃຫ້ກົມການຄ້າພາຍໃນ ເພື່ອດຳເນີນການຕໍ່ໄປ;

8. ເຮັດສັນຍາຊື້-ຂາຍຄຳ ຮ່ວມກັນ ລະຫວ່າງ ຜູ້ໃຫ້ບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ແລະ ຫົວໜ່ວຍທຸລະກິດຈຳໜ່າຍວັດຖຸມີຄ່າ (ຮ້ານຂາຍຄຳ) ເພື່ອຮັບປະກັນການຮັບຊື້, ຂາຍ ແລະ ສົ່ງມອບຄຳຕົວຈິງ ຕາມລາຄາຊື້-ຂາຍ ຜ່ານທາງເອເລັກໂຕຣນິກ ໂດຍທີ່ສັນຍາຕ້ອງມີອາຍຸບໍ່ຕໍ່າກວ່າ ຫົກ ປີ ແລະ ຕ້ອງແຈ້ງການຕໍ່ ຫຼື ຢຸດຕິ ສັນຍາກ່ອນມື້ໝົດອາຍຸ ຢ່າງໜ້ອຍ ຫົກສິບວັນ;

9. ດຳເນີນການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ບໍ່ເກີນ 95% ຂອງຈຳນວນວົງເງິນທີ່ຄ້ຳປະກັນໄວ້ ຊຶ່ງໝາຍຄວາມວ່າ ຍອດຊື້-ຂາຍເປັນຈຳນວນຄຳ ຕ້ອງມີຕົວຈິງ ຄູນໃຫ້ລາຄາຄຳໃນມື້ນັ້ນ ຕ້ອງບໍ່ເກີນ 95% ຂອງວົງເງິນຄ້ຳປະກັນ. ກໍລະນີ ຍອດການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຮອດ 95% ຂອງວົງເງິນຄ້ຳປະກັນດັ່ງກ່າວ, ຜູ້ດຳເນີນກິດຈະການ ຕ້ອງແຈ້ງໃຫ້ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າຊາບ ເພື່ອເພີ່ມວົງເງິນຄ້ຳປະກັນ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງຂໍ້ຕົກລົງສະບັບນີ້;

10. ປະຕິບັດພັນທະອາກອນ, ຄ່າທຳນຽມ ແລະ ຄ່າບໍລິການທີ່ກ່ຽວຂ້ອງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ;

11. ຕ້ອງແຈ້ງກົມການຄ້າພາຍໃນ ກ່ຽວກັບທຸລະກຳທີ່ເຄື່ອນໄຫວໜ້າສົງໄສເຂົ້າຂ່າຍການຟອກເງິນທັນທີ;

12. ສະຫຼຸບລາຍງານຜົນການດຳເນີນກິດຈະການ ປະຈຳເດືອນ ແລະ ປີ ໃຫ້ແກ່ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ, ກົມຄຸ້ມຄອງສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ແລະ ກົມຄຸ້ມຄອງທະນາຄານທຸລະກິດ, ທະນາຄານແຫ່ງ ສປປ ລາວ;

13. ສ້າງກົນໄກການຕິດຕາມ ເພື່ອໃຫ້ອົງການຄຸ້ມຄອງເຂົ້າເຖິງຂໍ້ມູນໃນລະບົບການຊື້-ຂາຍ ຜ່ານທາງເອເລັກໂຕຣນິກ ແຕ່ລະໄລຍະ.

## ໝວດທີ 5
## ຂໍ້ຫ້າມ

### ມາດຕາ 15 ຂໍ້ຫ້າມທົ່ວໄປ

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ເຄື່ອນໄຫວ ແລະ ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໂດຍບໍ່ໄດ້ຮັບອະນຸຍາດ;

2. ສ້າງອຸປະສັກກີດຂວາງ ໃຫ້ແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ໃນການປະຕິບັດວຽກງານຕິດຕາມ, ກວດກາ ການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

3. ໃຫ້ ຫຼື ເປັນສື່ກາງໃນການໃຫ້ສິນບົນ ແກ່ເຈົ້າໜ້າທີ່ ແລະ ພະນັກງານທີ່ກ່ຽວຂ້ອງ ວຽກງານຄຸ້ມຄອງການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

4. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

### ມາດຕາ 16 ຂໍ້ຫ້າມສຳລັບຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຫ້າມມີພຶດຕິກຳ ດັ່ງນີ້:

1. ນຳໃຊ້ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໝົດອາຍຸ;

2. ເອົາໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ຜູ້ອື່ນ ຫຼື ນິຕິບຸກຄົນອື່ນນຳໃຊ້;

3. ບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໂດຍບໍ່ຜ່ານບັນຊີທະນາຄານທຸລະກິດ ທີ່ຢູ່ໃນ ສປປ ລາວ ຫຼື ຊຳລະເປັນເງິນຕາຕ່າງປະເທດ;

4. ເປີດບັນຊີສະມາຊິກເກີນ ໜຶ່ງບັນຊີ ຕໍ່ຄົນ;

5. ປະຕິເສດຮັບຊື້ຄຳຄືນ ສຳລັບຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

6. ສ້າງແຮງຈູງໃຈເປັນລັກສະນະໃຫ້ດອກເບ້ຍ, ເງິນປັນຜົນ ຫຼື ຜົນຕອບແທນອື່ນ;

7. ສົ່ງມອບຄຳປອມ, ຄຳບໍ່ມີຄຸນນະພາບ ແລະ ຄຳບໍ່ໄດ້ມາດຕະຖານ ຕາມທີ່ໄດ້ຕົກລົງຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

8. ເປີດເຜີຍຂໍ້ມູນສ່ວນບຸກຄົນຂອງບັນຊີສະມາຊິກ;

9. ນຳໃຊ້ເຕັກໂນໂລຊີ ຫຼື ລະບົບທີ່ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນກ່ຽວຂ້ອງເຂົ້າໃນການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

10. ສະໜອງຂໍ້ມູນຂ່າວສານທີ່ບໍ່ຖືກຕ້ອງຕາມຄວາມຈິງ, ລາຍງານຊັກຊ້າ ຫຼື ບໍ່ລາຍງານ;

11. ປອມແປງເອກະສານ ແລະ ປິດບັງຂໍ້ມູນຄວາມຈິງ;

12. ປະຕິເສດການຮ່ວມມືກັບເຈົ້າໜ້າທີ່ລັດ;

13. ພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 17 ຂໍ້ຫ້າມສຳລັບເຈົ້າໜ້າທີ່ ຫຼື ພະນັກງານ**

ຫ້າມເຈົ້າໜ້າທີ່ ຫຼື ພະນັກງານ ມີພຶດຕິກຳ ດັ່ງນີ້:

1. ປະຕິບັດໜ້າທີ່ໂດຍບໍ່ມີຄວາມຍຸຕິທຳ, ລຳອຽງ, ບໍ່ຖືກຕ້ອງຕາມຂໍ້ຕົກລົງສະບັບນີ້ ຕໍ່ຜູ້ດຳເນີນທຸລະກິດ;

2. ສວຍໃຊ້ ສິດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ແລະ ພັກພວກຂອງຕົນ;

3. ກົດໜ່ວງຖ່ວງດຶງ ແລະ ແກ່ຍາວເວລາໃນການພິຈາລະນາເອກະສານ;

4. ປອມແປງເອກະສານ ຫຼື ໃຊ້ເອກະສານປອມ, ເປີດເຜີຍຄວາມລັບທາງທຸລະກິດ;

5. ຂໍເອົາ, ທວງເອົາ, ຮັບສິນບົນ ຫຼື ຫາຜົນປະໂຫຍດອື່ນໂດຍບໍ່ຖືກຕ້ອງ;

6. ພຶດຕິກຳອື່ນ ທີ່ລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນກິດຈະການ ບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ

**ມາດຕາ 18 ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ**

ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ແບ່ງອອກເປັນ ສາມ ຂັ້ນ ມີດັ່ງນີ້:

1. ຂັ້ນສູນກາງ ແມ່ນ ກົມການຄ້າພາຍໃນ;

2. ຂັ້ນແຂວງ ແມ່ນ ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ;

3. ຂັ້ນເມືອງ ແມ່ນ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ.

**ມາດຕາ 19 ສິດ ແລະ ໜ້າທີ່ຂອງກົມການຄ້າພາຍໃນ**

ກົມການຄ້າພາຍໃນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງ ແລະ ປັບປຸງນິຕິກຳ ກ່ຽວກັບການຄຸ້ມຄອງວຽກງານດຳເນີນທຸລະກິດບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ເປັນແຕ່ລະໄລຍະ;

2. ເຜີຍແຜ່ແນະນຳຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບການຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດທົ່ວປະເທດ;

3. ພິຈາລະນາ ອອກ, ຕໍ່, ໂຈະ ແລະ ຍົກເລີກ ໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍ ຜ່ານທາງເອເລັກໂຕຣນິກ;

4. ປະສານສົມທົບກັບທະນາຄານ ເພື່ອຄຸ້ມຄອງຫຼັກຊັບຄໍ້າປະກັນ ຂອງຜູ້ທີ່ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

5. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

6. ຕິດຕາມ, ກວດກາ ການເຄື່ອນໄຫວດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃນຂອບເຂດທົ່ວປະເທດ;

7. ຮັບ ແລະ ພິຈາລະນາຄຳສະເໜີຈາກປະຊາຊົນ, ເຊີນຜູ້ດຳເນີນກິດຈະການ ແລະ ຜູ້ທີ່ກ່ຽວຂ້ອງມາອະທິບາຍຊີ້ແຈງ ແລະ ແກ້ໄຂຂໍ້ຂັດແຍ່ງ ກ່ຽວກັບການເຄື່ອນໄຫວກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

8. ກ່າວເຕືອນ, ສຶກສາອົບຮົມ ແລະ ນຳໃຊ້ມາດຕະການ ຕໍ່ຜູ້ທີ່ລະເມີດກົດໝາຍ ແລະ ລະບຽບການກ່ຽວກັບການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

9. ຊີ້ນຳພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ໃນການຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;

10. ສະຫຼຸບລາຍງານ ກ່ຽວກັບການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ຂັ້ນເທິງຊາບຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 20 ສິດ ແລະ ໜ້າທີ່ ຂອງພະແນກອຸດສາຫະກຳແລະ ການຄ້າ ແຂວງ, ນະຄອນຫຼວງ**

ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບການຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດແຂວງ, ນະຄອນຫຼວງຂອງຕົນ;

2. ຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ທີ່ຕັ້ງຢູ່ພາຍໃນແຂວງ, ນະຄອນຫຼວງຂອງຕົນ;

3. ປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ກ່ຽວກັບການຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ພາຍໃນແຂວງ, ນະຄອນຫຼວງຂອງຕົນ;

4. ຮັບຄຳຮ້ອງທຸກ ຫຼື ຄຳສະເໜີຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບ ຫຼື ເສຍຫາຍຈາກການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ແລ້ວລາຍງານໃຫ້ຂັ້ນສູນກາງຊາບ;

5. ແຈ້ງການໃຫ້ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ຕິດຕາມ, ກວດກາ ແລະ ຄຸ້ມຄອງການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃນຂອບເຂດເມືອງພາຍໃນແຂວງຂອງຕົນ ເພື່ອລາຍງານໃຫ້ຊາບເປັນແຕ່ລະໄລຍະ;

6. ສະຫຼຸບລາຍງານຄຸ້ມຄອງ, ຕິດຕາມ, ກວດກາການເຄື່ອນໄຫວດຳເນີນກິດຈະການບໍລິການຊື້-ຂາຍຄຳຜ່ານຊ່ອງທາງເອເລັກໂຕຣນິກ ຢູ່ໃນທ້ອງຖິ່ນຂອງຕົນໃຫ້ກົມການຄ້າພາຍໃນ ຊາບ ເປັນແຕ່ລະໄລຍະ;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 21 ສິດ ແລະ ໜ້າທີ່ ຂອງຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ**

ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ໂຄສະນາເຜີຍແຜ່ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ພ້ອມດ້ວຍກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ, ຂໍ້ມູນຂ່າວສານ ກ່ຽວກັບການຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ສັງຄົມຮັບຊາບຢ່າງທົ່ວເຖິງ ໃນຂອບເຂດເມືອງ, ນະຄອນຂອງຕົນ;

2. ຊຸກຍູ້ ແລະ ແນະນຳ ກ່ຽວກັບການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ທີ່ສ້າງຕັ້ງຢູ່ເມືອງ, ນະຄອນຂອງຕົນ;

3. ຮັບຄຳຮ້ອງທຸກ ຫຼື ຄຳສະເໜີຈາກບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮັບຜົນກະທົບ ຫຼື ເສຍຫາຍຈາກການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ເພື່ອລາຍງານຫາຂັ້ນແຂວງ, ນະຄອນຫຼວງ;

4. ຕິດຕາມ, ກວດກາ ແລະ ຄຸ້ມຄອງການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຢູ່ເມືອງ, ນະຄອນ;

5. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດຄຸ້ມຄອງວຽກງານດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງ ປະຈຳປີ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

## ໝວດທີ 7
## ມາດຕະການຕໍ່ຜູ້ລະເມີດ ແລະ ມາດຕະການປັບໃໝ

### ມາດຕາ 22 ມາດຕະການຕໍ່ຜູ້ລະເມີດ

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການ ກ່າວເຕືອນ ສຶກສາອົບຮົມ, ລົງວິໄນ, ປັບໃໝ, ຊົດໃຊ້ຄ່າເສຍຫາຍທາງແພ່ງ ຫຼື ລົງໂທດທາງອາຍາ ຕາມກໍລະນີເບົາ ຫຼື ໜັກ.

### ມາດຕາ 23 ມາດຕະການປັບໃໝ

ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ຕາມກໍລະນີ ດັ່ງນີ້:

1. ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໂດຍບໍ່ມີໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຈະຖືກປັບໃໝ ດັ່ງນີ້:
    1) ຄັ້ງທີ ໜຶ່ງ ຈະຖືກປັບໃໝ 30,000,000 ກີບ (ສາມສິບລ້ານກີບ) ພ້ອມທັງເຮັດບົດບັນທຶກ;
    2) ຄັ້ງທີ ສອງ ຈະຖືກປັບໃໝ 50,000,000 ກີບ (ຫ້າສິບລ້ານກີບ) ພ້ອມທັງເຮັດບົດບັນທຶກ;
    3) ຄັ້ງທີ ສາມ ຖ້າຫາກຍັງບໍ່ດຳເນີນການໃດໆ ໃຫ້ຍຸບເລີກດຳເນີນກິດຈະການບໍລິການຊື້-ຂາຍຄຳ;
2. ຍອດການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ເກີນກວ່າ ວົງເງິນຫຼັກຊັບຄ້ຳປະກັນທີ່ກຳນົດໄວ້ ຈະຖືກປັບໃໝຕາມຈຳນວນເງິນທີ່ເກີນມາ;
3. ບໍ່ສົ່ງມອບຄຳ ຕາມໃບຢັ້ງຢືນເອເລັກໂຕຣນິກໃນການຊື້-ຂາຍ ຖອນຄຳ ຈະຖືກຍຸບເລີກດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;
4. ເອົາໃບອະນຸຍາດດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ໃຫ້ບຸກຄົນ, ນິຕິບຸກຄົນອື່ນນຳໃຊ້ ຈະຖືກປັບໃໝ 100,000,000 ກີບ (ໜຶ່ງຮ້ອຍລ້ານກີບ) ພ້ອມທັງເຮັດບົດບັນທຶກ ແລະ ຖ້າຍັງສືບຕໍ່ໃຫ້ບຸກຄົນ, ນິຕິບຸກຄົນອື່ນນຳໃຊ້ໃຫ້ຍຸບເລີກດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ.

### ມາດຕາ 24 ການປັບໃໝເພີ່ມ

ຜູ້ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ມີພຶດຕິກຳທີ່ເປັນການລະເມີດລະບຽບການ ເປັນຄັ້ງທີ ສອງ ແລະ ຄັ້ງທີ ສາມ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 23 ຂໍ້ທີ 2, 3, ແລະ 4 ຂອງຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝເພີ່ມ ດັ່ງນີ້:

1. ລະເມີດຄັ້ງທີ ສອງ ຈະຖືກປັບໃໝ ສອງ ເທົ່າ;
2. ລະເມີດຄັ້ງທີ ສາມ ຈະຖືກປັບໃໝ ຫ້າ ເທົ່າ ພ້ອມທັງ ຍົກເລີກໃບອະນຸຍາດກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ.

## ໝວດທີ 8
## ການຊຳລະ, ການຄຸ້ມຄອງ ແລະ ນຳໃຊ້ ເງິນປັບໃໝ

**ມາດຕາ 25 ການຊຳລະເງິນປັບໃໝ**

ຜູ້ທີ່ລະເມີດລະບຽບການດຳເນີນ ກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ຕ້ອງຊຳລະເງິນປັບໃໝຕາມບົດບັນທຶກການລະເມີດ ທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້ ໂດຍຊຳລະເຂົ້າໃນບັນຊີຂອງກະຊວງອຸດສາຫະກຳ ແລະ ການຄ້າ.

**ມາດຕາ 26 ການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝຕາມຂໍ້ຕົກລົງສະບັບນີ້ ຫົກສິບສ່ວນຮ້ອຍ (60%) ມອບເຂົ້າງົບປະມານແຫ່ງລັດ ສ່ວນທີ່ເຫຼືອ ສີ່ສິບສ່ວນຮ້ອຍ (40%) ໃຫ້ຈັດເປັນລາຍຮັບ-ລາຍຈ່າຍວິຊາການ ແລະ ຂຶ້ນແຜນການນຳໃຊ້ງົບປະມານ ຕາມເປົ້າໝາຍທີ່ໄດ້ກຳນົດໄວ້ໃນມາດຕາ 27 ຂອງຂໍ້ຕົກລົງສະບັບນີ້.

ສຳລັບການຈັດຕັ້ງປະຕິບັດແຜນງົບປະມານປະຈຳປີ ແມ່ນໃຫ້ປະຕິບັດຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 27 ເປົ້າໝາຍການນຳໃຊ້ເງິນຈາກການປັບໃໝ**

ເງິນທີ່ໄດ້ຈາກການປັບໃໝ ການດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ທີ່ຈັດເປັນລາຍຮັບ-ລາຍຈ່າຍ ວິຊາການ ນຳໃຊ້ເຂົ້າໃນວຽກງານ ດັ່ງນີ້:

1. ການລົງຕິດຕາມ ແລະ ກວດກາການຈັດຕັ້ງປະຕິບັດວຽກງານ ກ່ຽວກັບການຄຸ້ມຄອງທຸລະກິດບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ລວມທັງວຽກງານທີ່ຈຳເປັນ ແລະ ຮີບດ່ວນ;
2. ນຳໃຊ້ເຂົ້າວຽກງານບໍລິຫານ, ໂຄສະນາເຜີຍແຜ່ ນິຕິກຳ, ປຶ້ມຄູ່ມື, ຈັດຝຶກອົບຮົມ ດ້ານວິຊາການ ກ່ຽວກັບການຄຸ້ມຄອງວຽກງານທຸລະກິດບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ;
3. ການຈັດຊື້ວັດຖຸປະກອນ ແລະ ສິ່ງອຳນວຍຄວາມສະດວກໃຫ້ແກ່ພະນັກງານ.

## ໝວດທີ 9
## ບົດບັນຍັດສຸດທ້າຍ

**ມາດຕາ 28 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມການຄ້າພາຍໃນ, ພະແນກອຸດສາຫະກຳ ແລະການຄ້າ ແຂວງ, ນະຄອນຫຼວງ ແລະ ຫ້ອງການອຸດສາຫະກຳ ແລະ ການຄ້າ ເມືອງ, ນະຄອນ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ຢ່າງເຂັ້ມງວດ.

ສຳລັບ ຫົວໜ່ວຍທຸລະກິດທີ່ດຳເນີນກິດຈະການບໍລິການຊື້-ຂາຍຄຳ ຜ່ານທາງເອເລັກໂຕຣນິກ ກ່ອນການປະກາດໃຊ້ຂໍ້ຕົກລົງສະບັບນີ້ ຕ້ອງປະຕິບັດເງື່ອນໄຂ ຕາມທີ່ລະບຸໃນຂໍ້ຕົກລົງສະບັບນີ້ ພາຍໃນ ຮ້ອຍຊາວວັນ ນັບແຕ່ຂໍ້ຕົກລົງສະບັບນີ້ມີຜົນສັກສິດ.

**ມາດຕາ 29 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດພາຍຫຼັງລົງລາຍເຊັນ ສີ່ສິບຫ້າ ວັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ.

**ລັດຖະມົນຕີ**

ມະໄລທອງ ກົມມະສິດ